# ວິທີນຳໃຊ້ປຶ້ມແບບຮຽນເຫຼັ້ມນີ້

## ລັກສະນະພິເສດຂອງປຶ້ມແບບຮຽນ

### ເພີ່ມສິ່ງທີ່ສາມາດເຮັດໄດ້ໃນສະຖານະການຂອງການດຳລົງຊີວິດຢູ່ປະເທດຍີ່ປຸ່ນ

"ອິໂລະໂດະລິ ພາສາຍີ່ປຸ່ນໃນການດຳລົງຊີວິດ" ແມ່ນປຶ້ມແບບຮຽນພາສາຍີ່ປຸ່ນສຳລັບຜູ້ທີ່ຈະດຳລົງຊີວິດຢູ່ປະເທດຍີ່ປຸ່ນ. ຜູ້ຮຽນຈະໄດ້ຮຽນພາສາຍີ່ປຸ່ນທີ່ຈຳເປັນໃນສະຖານະການຕ່າງໆຂອງການດຳລົງຊີວິດຢູ່ປະເທດຍີ່ປຸ່ນເຊັ່ນ: ການເຮັດວຽກ, ການຊື້ເຄື່ອງ, ການໄປທ່ຽວ, ການກິນອາຫານ, ການສົນທະນາແລກປ່ຽນກັບຜູ້ອື່ນ ແລະອື່ນໆ.

ເປົ້າໝາຍການຮຽນຂອງປຶ້ມແບບຮຽນເຫຼັ້ມນີ້ແມ່ນການເພີ່ມສິ່ງທີ່ສາມາດເຮັດໄດ້ໃນການດຳລົງຊີວິດຢູ່ປະເທດຍີ່ປຸ່ນ ໂດຍການໃຊ້ພາສາຍີ່ປຸ່ນໃນສະຖານະການຕົວຈິງ. ສາມາດເຮັດຫຍັງໄດ້ໃນສະຖານະການໃດເອີ້ນວ່າ: Can-do. ການຮຽນຕາມເປົ້າໝາຍ Can-do ຈະເຮັດໃຫ້ເພີ່ມທັກສະການສື່ສານທີ່ຈຳເປັນໃນການດຳລົງຊີວິດຢູ່ປະເທດຍີ່ປຸ່ນ.

### ຜູ້ຮຽນຈະໄດ້ຮຽນພາສາຍີ່ປຸ່ນລະດັບ A1-A2

ປຶ້ມແບບຮຽນ "ອິໂລະໂດະລິ" ແບ່ງອອກເປັນ 3 ພາກສ່ວນຄື: ເລີ່ມຕົ້ນ, ພື້ນຖານ 1 ແລະ ພື້ນຖານ 2. ເລີ່ມຕົ້ນແມ່ນທຽບເທົ່າກັບລະດັບ A1 ຕາມ JF Standard*, ສຳລັບພື້ນຖານ 1 ແລະ ພື້ນຖານ 2 ແມ່ນທຽບເທົ່າກັບລະດັບ A2. ໃນລະດັບ A1 ຜູ້ຮຽນຈະສາມາດທັກທາຍ ແລະ ສື່ສານແບບງ່າຍໆໂດຍໃຊ້ສຳນວນທີ່ຈື່ໄດ້ໃນບົດຮຽນ, ສ່ວນລະດັບ A2 ຜູ້ຮຽນຈະສາມາດສົນທະນາໃນຊີວິດປະຈຳວັນຂັ້ນພື້ນຖານແບບສັ້ນໆກ່ຽວກັບຫົວຂໍ້ທີ່ຮູ້ຈັກດີ.

*JF Standard ແບ່ງອອກເປັນ 6 ລະດັບຄື: A1-C2. ແຕ່ລະລະດັບແມ່ນອີງຕາມມາດຕະຖານສາກົນທີ່ໃຊ້ວັດແທກຄວາມຊ່ຽວຊານດ້ານພາສາຂອງສະພາເອີຣົບ (CEFR).

**ລະດັບ A2**

- ສາມາດເຂົ້າໃຈສຳນວນ ຫຼື ປະໂຫຍກທີ່ມັກໃຊ້ໃນຊີວິດປະຈຳວັນເຊັ່ນ: ຂໍ້ມູນພື້ນຖານຂອງຕົນເອງ ຫຼື ຄອບຄົວ, ການຊື້ເຄື່ອງ, ສະຖານທີ່ໃກ້ຄຽງ, ການເຮັດວຽກ ແລະອື່ນໆທີ່ເປັນເລື່ອງກ່ຽວຂ້ອງກັບຕົນເອງໂດຍກົງ.
- ສາມາດແລກປ່ຽນຂໍ້ມູນກ່ຽວກັບເລື່ອງທີ່ຮູ້ຈັກດີຖ້າຢູ່ໃນຂອບເຂດທີ່ເປັນເລື່ອງງ່າຍໆໃນຊີວິດປະຈຳວັນ.
- ສາມາດອະທິບາຍດ້ວຍຄຳສັບງ່າຍໆກ່ຽວກັບສະຖານະການອ້ອມຕົວ ຫຼື ຄວາມເປັນມາຂອງຕົນເອງ ຫຼື ເລື່ອງທີ່ຢູ່ໃນຂອບເຂດທີ່ຈຳເປັນໄດ້.

**ລະດັບ A1**

- ສາມາດເຂົ້າໃຈ ແລະ ໃຊ້ສຳນວນພື້ນຖານທີ່ກ່ຽວຂ້ອງກັບສະຖານະການທີ່ມັກໃຊ້ໃນຊີວິດປະຈຳວັນເພື່ອຕອບສະໜອງຄວາມຕ້ອງການທີ່ຊັດເຈນໄດ້.
- ສາມາດແນະນຳຕົນເອງ ແລະ ຜູ້ອື່ນໄດ້, ສາມາດຖາມ-ຕອບກ່ຽວກັບຂໍ້ມູນສ່ວນຕົວເຊັ່ນ: ອາໄສຢູ່ໃສ, ຮູ້ຈັກໃຜ, ສິ່ງຂອງທີ່ມີ ແລະອື່ນໆໄດ້.
- ຖ້າຄູ່ສົນທະນາໃຊ້ພາສາທີ່ເຂົ້າໃຈງ່າຍ, ເວົ້າຊ້າໆ ແລະ ຊ່ວຍເຫຼືອໃນເວລາສົນທະນາກໍຈະສາມາດສື່ສານໂຕ້ຕອບໄດ້.




ຄູ່ມືສຳລັບຜູ້ໃຊ້ JF Standard (ສະບັບໃໝ່)


©The Japan Foundation

## ພັດທະນາມາຈາກ “JF Can-do ສໍາລັບພາສາຍີ່ປຸ່ນໃນການດໍາລົງຊີວິດ”

ມູນນິທິຍີ່ປຸ່ນໄດ້ນໍາສະເໜີ “JF Can-do ສໍາລັບພາສາຍີ່ປຸ່ນໃນການດໍາລົງຊີວິດ” ໃນປີ 2019. ນີ້ແມ່ນການໃຊ້ Can-do ເປັນຕົວຊີ້ວັດລະດັບຄວາມສາມາດດ້ານພາສາຍີ່ປຸ່ນຂັ້ນພື້ນຖານທີ່ຈໍາເປັນຕໍ່ການດໍາລົງຊີວິດຢູ່ປະເທດຍີ່ປຸ່ນສໍາລັບຄົນຕ່າງປະເທດທີ່ບໍ່ໄດ້ໃຊ້ພາສາຍີ່ປຸ່ນເປັນພາສາແມ່ ແລະ ເດີນທາງມາປະເທດຍີ່ປຸ່ນດ້ວຍສະຖານະພາບຜູ້ເຮັດວຽກທັກສະສະເພາະດ້ານ. ປຶ້ມແບບຮຽນ “ອິໂລະໂດະລິ” ພັດທະນາຂຶ້ນໂດຍກໍານົດເປົ້າໝາຍການຮຽນບົນພື້ນຖານ “JF Can-do ສໍາລັບພາສາຍີ່ປຸ່ນໃນການດໍາລົງຊີວິດ” ເຊິ່ງຜູ້ຮຽນທີ່ໃຊ້ປຶ້ມແບບຮຽນນີ້ສາມາດພັດທະນາທັກສະການສື່ສານຂັ້ນພື້ນຖານທີ່ຈໍາເປັນຕໍ່ການດໍາລົງຊີວິດປະຈໍາວັນຢູ່ປະເທດຍີ່ປຸ່ນ. ດັ່ງນັ້ນ, ຜູ້ທີ່ມີເປົ້າໝາຍເດີນທາງມາປະເທດຍີ່ປຸ່ນດ້ວຍສະຖານະພາບນີ້ (ຜູ້ເຮັດວຽກທັກສະສະເພາະດ້ານ) ສາມາດໃຊ້ປຶ້ມແບບຮຽນນີ້ເພື່ອຮຽນພາສາຍີ່ປຸ່ນ ແລະ ເພື່ອກະກຽມສອບເສັງວັດແທກລະດັບພາສາຍີ່ປຸ່ນຂັ້ນພື້ນຖານຂອງມູນນິທິຍີ່ປຸ່ນ (JFT-Basic) ໄດ້.

## ຜູ້ຮຽນຈະໄດ້ຮຽນພາສາຍີ່ປຸ່ນທີ່ໃຊ້ໃນຕົວຈິງໂດຍຜ່ານຟາຍສຽງ ແລະ ສື່ການຮຽນ-ການສອນຕົວຈິງທີ່ຫຼາກຫຼາຍ

ປຶ້ມແບບຮຽນ “ອິໂລະໂດະລິ” ໃຫ້ຄວາມສໍາຄັນກັບການຟັງສຽງ. ຍ້ອນວ່າການຟັງພາສາຍີ່ປຸ່ນໃນປະລິມານຫຼາຍເປັນສິ່ງສໍາຄັນທີ່ຈະເຮັດໃຫ້ຜູ້ຮຽນສາມາດໃຊ້ພາສາຍີ່ປຸ່ນໃນສະຖານະການຕົວຈິງໄດ້. ດັ່ງນັ້ນ, ໃນປຶ້ມແບບຮຽນຈຶ່ງມີຟາຍສຽງທີ່ຫຼາກຫຼາຍ. ນອກຈາກນັ້ນ, ສໍາລັບກິດຈະກໍາການອ່ານ ແລະ ຂຽນກໍໄດ້ໃຊ້ສື່ການຮຽນ-ການສອນທີ່ໃຊ້ໃນຊີວິດຕົວຈິງຢູ່ປະເທດຍີ່ປຸ່ນ ແລະ ແບບຈໍາລອງຕ່າງໆເພື່ອເຮັດໃຫ້ຜູ້ຮຽນໄດ້ຝຶກພາສາຍີ່ປຸ່ນໃນສະຖານະການທີ່ໃກ້ຄຽງກັບການໃຊ້ຊີວິດຕົວຈິງຢູ່ປະເທດຍີ່ປຸ່ນໃຫ້ຫຼາຍທີ່ສຸດ. ການຝຶກໂດຍການໃຊ້ສື່ການຮຽນ-ການສອນທີ່ກ່າວມາຂ້າງເທິງນັ້ນຈະເຮັດໃຫ້ຜູ້ຮຽນສາມາດຮຽນພາສາຍີ່ປຸ່ນທີ່ໃຊ້ໄດ້ທັນທີໃນຕົວຈິງ.

## ມີຫົວຂໍ້ທີ່ຫຼາກຫຼາຍກວມເອົາເນື້ອໃນທີ່ໃຊ້ໃນການດໍາລົງຊີວິດ

ປຶ້ມແບບຮຽນ “ອິໂລະໂດະລິ” ໄດ້ແບ່ງບົດຮຽນຕາມຫົວຂໍ້. ໃນແຕ່ລະບົດປະກອບມີຫົວຂໍ້ຕ່າງໆທີ່ກ່ຽວຂ້ອງກັບການດໍາລົງຊີວິດຢູ່ປະເທດຍີ່ປຸ່ນ. ຜູ້ຮຽນບໍ່ໄດ້ຮຽນພຽງແຕ່ພາສາຍີ່ປຸ່ນເທົ່ານັ້ນແຕ່ຍັງຈະໄດ້ສໍາພັດວັດທະນະທໍາ ແລະ ການດໍາລົງຊີວິດຢູ່ປະເທດຍີ່ປຸ່ນຜ່ານສື່ການຮຽນ-ການສອນທີ່ກ່ຽວຂ້ອງກັບການດໍາລົງຊີວິດປະຈໍາວັນ ແລະ ສະພາບການເມືອງ, ເສດຖະກິດ, ສັງຄົມ ແລະອື່ນໆຂອງຍີ່ປຸ່ນ. ນອກຈາກນັ້ນ, ຍັງມີພາກສ່ວນຂໍ້ມູນທີ່ເປັນປະໂຫຍດສໍາລັບການດໍາລົງຊີວິດຢູ່ປະເທດຍີ່ປຸ່ນ.

## ຜູ້ຮຽນຈະໄດ້ຮຽນຄວາມຮູ້ດ້ານພາສາຢ່າງພຽງພໍເຊັ່ນ: ໄວຍາກອນ, ຕົວອັກສອນຄັນຈິ ແລະອື່ນໆ

ເປົ້າໝາຍຂອງປຶ້ມແບບຮຽນເຫຼັ້ມນີ້ແມ່ນເພື່ອພັດທະນາຄວາມສາມາດດ້ານພາສາຍີ່ປຸ່ນຂອງຜູ້ຮຽນໃຫ້ສາມາດໃຊ້ຕົວຈິງໄດ້, ບໍ່ໄດ້ມີຈຸດປະສົງເພື່ອໃຫ້ຈື່ໄວຍາກອນ, ຄໍາສັບ, ຕົວອັກສອນຄັນຈິ ແລະອື່ນໆແບບຕາຍໂຕ. ເຖິງຢ່າງໃດກໍຕາມ, ປັດໄຈດັ່ງກ່າວກໍແມ່ນສິ່ງຈໍາເປັນສໍາລັບຜູ້ຮຽນເພື່ອບັນລຸເປົ້າໝາຍ Can-do ເຊິ່ງຜູ້ຮຽນສາມາດຮຽນໄວຍາກອນ, ຄໍາສັບ ແລະ ຕົວອັກສອນຄັນຈິຜ່ານບໍລິບົດການສື່ສານໃນປຶ້ມແບບຮຽນນີ້ໄດ້. ປຶ້ມແບບຮຽນ ‘‘ອິໂລະໂດະລິ’’ ຍັງມີໄວຍາກອນ, ຄໍາສັບ ແລະ ຕົວອັກສອນຄັນຈິທີ່ປາກົດໃນປຶ້ມແບບຮຽນພາສາຍີ່ປຸ່ນຂັ້ນພື້ນຖານທົ່ວໄປນໍາອີກດ້ວຍ.

## ສາມາດດາວໂຫຼດໄດ້ທາງເວັບໄຊ

ປຶ້ມແບບຮຽນ “ອິໂລະໂດະລິ” ມີການເຜີຍແຜ່ທາງເວັບໄຊ, ຈຶ່ງສາມາດດາວໂຫຼດໄດ້ຕາມໃຈບໍ່ວ່າຈະຢູ່ບ່ອນໃດໃນໂລກ. ປຶ້ມແບບຮຽນຫຼັກໄດ້ຖືກເຜີຍແຜ່ໃນຮູບແບບຟາຍ PDF ຈຶ່ງສາມາດພິມອອກມາໃຊ້, ເບິ່ງດ້ວຍແທັບເລັດ ຫຼື ສະມາດໂຟນກໍໄດ້. ສໍາລັບຟາຍສຽງກໍສາມາດດາວໂຫຼດ ຫຼື ຟັງຈາກລະບົບສະຕຣີມມິ່ງໄດ້.

## ມີບາງເນື້ອໃນກ່ຽວຂ້ອງກັບປຶ້ມແບບຮຽນ “ມະລຶໂກະໂຕະ”

ຫົວຂໍ້ໃນປຶ້ມແບບຮຽນ “ອິໂລະໂດະລິ” ແລະ ຫົວຂໍ້ໄວຍາກອນແຕ່ລະບົດມີບາງເນື້ອໃນກ່ຽວຂ້ອງກັບປຶ້ມແບບຮຽນ “ມະລຶໂກະໂຕະ” ທີ່ມູນນິທິຍີ່ປຸ່ນໄດ້ພັດທະນາຂຶ້ນມາເພື່ອຜູ້ຮຽນພາສາຍີ່ປຸ່ນຢູ່ຕ່າງປະເທດ. ດັ່ງນັ້ນ, ຜູ້ຮຽນສາມາດໃຊ້ “ອິໂລະໂດະລິ” ຄວບຄູ່ກັບ “ມະລຶໂກະໂຕະ” ໄດ້ ຫຼື ຈະໃຊ້ບາງສ່ວນຂອງ “ມະລຶໂກະໂຕະ” ເປັນສື່ການຮຽນ-ການສອນເພີ່ມຕື່ມຂອງ “ອິໂລະໂດະລິ” ຫຼື ຈະໃຊ້ເວັບໄຊຂອງ “ມະລຶໂກະໂຕະ” ເຊັ່ນ: Marugoto Plus ໃນການຮຽນ “ອິໂລະໂດະລິ” ກໍໄດ້.

## “ອິໂລະໂດະລິ” ມີເປົ້າໝາຍສ້າງຄວາມເຂົ້າໃຈເຊິ່ງກັນ ແລະ ກັນລະຫວ່າງຄົນກັບຄົນໂດຍຜ່ານການສື່ສານ ແລະ ຄວາມເຂົ້າໃຈກ່ຽວກັບວັດທະນະທໍາ

ຈຸດມຸ່ງໝາຍສູງສຸດໃນການຮຽນພາສາຍີ່ປຸ່ນໂດຍໃຊ້ປຶ້ມແບບຮຽນ “ອິໂລະໂດະລິ” ແມ່ນຄວາມເຂົ້າໃຈເຊິ່ງກັນ ແລະ ກັນລະຫວ່າງຄົນ. ນີ້ແມ່ນປັດຊະຍາພື້ນຖານຂອງ JF Standard ທີ່ “ອິໂລະໂດະລິ” ໃຊ້ເປັນບ່ອນອີງ. ຜູ້ຮຽນສາມາດພັດທະນາທັກສະການສື່ສານພາສາຍີ່ປຸ່ນ ແລະ ຄວາມເຂົ້າໃຈກ່ຽວກັບວັດທະນະທໍາຜ່ານພາສາຍີ່ປຸ່ນທີ່ໄດ້ຮຽນຈາກ “ອິໂລະໂດະລິ”, ຈາກທັກສະດັ່ງກ່າວຜູ້ທີ່ຫາກໍເລີ່ມດໍາລົງຊີວິດຢູ່ປະເທດຍີ່ປຸ່ນ ແລະ ຜູ້ທີ່ອາໄສຢູ່ປະເທດຍີ່ປຸ່ນຈະສາມາດແນະນໍາຕົນເອງ, ທໍາຄວາມຮູ້ຈັກເຊິ່ງກັນ ແລະ ກັນ ແລະ ສົນທະນາແລກປ່ຽນກັນເຮັດໃຫ້ເກີດ “ຄວາມເຂົ້າໃຈເຊິ່ງກັນ ແລະ ກັນ”.


©The Japan Foundation

## ໂຄງສ້າງຂອງປຶ້ມແບບຮຽນ

ປຶ້ມແບບຮຽນ "ອິໂລະໂດະລິ" ແບ່ງອອກເປັນ 3 ພາກສ່ວນຄື: ເລີ່ມຕົ້ນ, ພື້ນຖານ 1 ແລະ ພື້ນຖານ 2. ແຕ່ລະພາກສ່ວນມີເນື້ອໃນດັ່ງຕໍ່ໄປນີ້:

### ປຶ້ມແບບຮຽນຫຼັກ (PDF)

- ໜ້າປົກ
- ຄຳນຳ (ພາສາຍີ່ປຸ່ນ ແລະ ພາສາລາວ)
- ວິທີນຳໃຊ້ປຶ້ມແບບຮຽນເຫຼັ້ມນີ້ (ພາສາຍີ່ປຸ່ນ ແລະ ພາສາລາວ)
- ຕາຕະລາງເນື້ອໃນ (ພາສາຍີ່ປຸ່ນ ແລະ ພາສາລາວ)
- ບົດທີ 1-18
  - ກິດຈະກຳ
  - ເນື້ອໃນບົດສົນທະນາຂອງການຟັງ
  - ຄຳສັບຄັນຈິ
  - ໄວຍາກອນ
  - ສິ່ງທີ່ຄວນຮູ້ກ່ຽວກັບການດຳລົງຊີວິດຢູ່ປະເທດຍີ່ປຸ່ນ
- ກວດ Can-do
- ຂໍ້ມູນກ່ຽວກັບຄະນະຜູ້ສ້າງ ແລະ ພິມປຶ້ມແບບຮຽນ

### ຟາຍສຽງ (MP3)

- ບົດທີ 1-18

### ເອກະສານເພີ່ມຕື່ມຕ່າງໆ*

- ຄຳຕອບ
- ຕາຕະລາງຄຳສັບ
- ຄູ່ມືວິທີການສິດສອນ
- ອື່ນໆ

* ເອກະສານເພີ່ມຕື່ມຕ່າງໆມີກຳນົດເຜີຍແຜ່ພາຍຫຼັງຕາມລຳດັບ.


©The Japan Foundation

# ວິທີນຳໃຊ້ປຶ້ມແບບຮຽນ

## 1 ໂຄງສ້າງຂອງແຕ່ລະບົດ

ປຶ້ມແບບຮຽນ "ເລີ່ມຕົ້ນ", "ພື້ນຖານ 1" ແລະ "ພື້ນຖານ 2" ປະກອບມີເນື້ອໃນເຫຼັ້ມລະ 9 ຫົວຂໍ້ 18 ບົດ. ໃນ 1 ບົດຈະໃຊ້ເວລາປະມານ 150-180 ນາທີ. ແຕ່ໃນແຕ່ລະບົດມີຈຳນວນກິດຈະກຳແຕກຕ່າງກັນ. ດັ່ງນັ້ນ, ຈຶ່ງຕ້ອງປັບເວລາການຮຽນ-ການສອນຕາມຄວາມເໝາະສົມ.

ໂຄງສ້າງຂອງແຕ່ລະບົດມີດັ່ງຕໍ່ໄປນີ້:

- ●ຫົວຂໍ້ ແລະ ຊື່ບົດ
- ●ຄຳຖາມເພື່ອເຂົ້າສູ່ບົດຮຽນ
  ເປັນຄຳຖາມທີ່ຊ່ວຍໃຫ້ຜູ້ຮຽນຈິນຕະນາການກ່ຽວກັບຫົວຂໍ້ໃນບົດນັ້ນໄດ້ຢ່າງຊັດເຈນ. ຜູ້ຮຽນສາມາດເລົ່າປະສົບການ ແລະ ສົນທະນາກັບໝູ່ໃນຫ້ອງຮຽນໄດ້.
- ●ກິດຈະກຳ
  ຖືວ່າເປັນສ່ວນສຳຄັນຂອງປຶ້ມແບບຮຽນເຫຼັ້ມນີ້ເພາະເປັນກິດຈະກຳທີ່ຊ່ວຍໃຫ້ຜູ້ຮຽນບັນລຸເປົ້າໝາຍ Can-do. ໃນແຕ່ລະບົດຈະມີ 3-6 ກິດຈະກຳ. ແຕ່ລະກິດຈະກຳຈະໄດ້ຮຽນພາສາຍີ່ປຸ່ນທີ່ໃຊ້ໃນສະຖານະການຕົວຈິງ.
- ●ເນື້ອໃນບົດຟັງ
- ●ຄຳສັບຄັນຈິ
  ຮຽນຄຳສັບຄັນຈິທີ່ປາກົດໃນກິດຈະກຳ. (ບົດທີ 1 ຂອງ "ເລີ່ມຕົ້ນ" ຈະໄດ້ຮຽນຕົວອັກສອນຮິລະງະນະ, ບົດທີ 2 ຈະໄດ້ຮຽນຕົວອັກສອນຄະຕະຄະນະ.
- ●ໄວຍາກອນ
  ແມ່ນຄຳອະທິບາຍກ່ຽວກັບສຳນວນ ແລະ ຮູບປະໂຫຍກທີ່ຮຽນໃນແຕ່ລະບົດ. (ບົດທີ 1 ແລະ ບົດທີ 2 ຂອງ "ເລີ່ມຕົ້ນ" ແມ່ນບໍ່ມີ).
- ●ສິ່ງທີ່ຄວນຮູ້ກ່ຽວກັບການດຳລົງຊີວິດຢູ່ປະເທດຍີ່ປຸ່ນ
  ແມ່ນຄຳອະທິບາຍກ່ຽວກັບວັດທະນະທຳຍີ່ປຸ່ນ ແລະ ສະພາບການເມືອງ, ເສດຖະກິດ, ສັງຄົມ ແລະອື່ນໆຂອງຍີ່ປຸ່ນທີ່ປາກົດໃນກິດຈະກຳ.




 ©The Japan Foundation

## 2 ເນື້ອໃນກິດຈະກຳ ແລະ ຂັ້ນຕອນ

### (1) ປະເພດກິດຈະກຳ ແລະ ເປົ້າໝາຍ

ໃນແຕ່ລະບົດມີກິດຈະກຳ 4 ປະເພດຄື: ສົນທະນາ, ຟັງ, ອ່ານ ແລະ ຂຽນ. ແຕ່ລະກິດຈະກຳຈະແຍກກັນ, ແຕ່ໃນ 1 ບົດມີບາງເນື້ອໃນກ່ຽວຂ້ອງກັນ. ຈຳນວນກິດຈະກຳ, ປະເພດ ແລະ ການລຽງລຳດັບຈະແຕກຕ່າງກັນຂຶ້ນກັບແຕ່ລະບົດ, ແຕ່ໂດຍລວມກິດຈະກຳສົນທະນາມີຫຼາຍກວ່າໝູ່. ເປົ້າໝາຍໂດຍລວມຂອງກິດຈະກຳທັງ 4 ປະເພດມີດັ່ງຕໍ່ໄປນີ້:

| | | |
|---|---|---|
| | ສົນທະນາ | ເປົ້າໝາຍເພື່ອໃຫ້ຜູ້ຮຽນສາມາດຖາມ-ຕອບໃນສະຖານະການທີ່ຮູ້ຈັກດີ ແລະ ສາມາດອະທິບາຍເລື່ອງກ່ຽວກັບຕົນເອງ ຫຼື ເລື່ອງທີ່ຮູ້ຈັກດີແບບງ່າຍໆໄດ້. |
| | ຟັງ | ເປົ້າໝາຍເພື່ອໃຫ້ຜູ້ຮຽນເຂົ້າໃຈເນື້ອໃນສຳຄັນທີ່ຄູ່ສົນທະນາເວົ້າໃນຊີວິດປະຈຳວັນ ແລະ ສາມາດຈັບໃຈຄວາມຂໍ້ມູນທີ່ສຳຄັນຜ່ານການຟັງຂ່າວແບບງ່າຍໆ ຫຼື ການປະກາດໃນສະຖານທີ່ສາທາລະນະໄດ້. |
| | ອ່ານ | ເປົ້າໝາຍເພື່ອໃຫ້ຜູ້ຮຽນສາມາດຈັບໃຈຄວາມຂໍ້ມູນທີ່ສຳຄັນຈາກການອ່ານແຈ້ງການ, ປ້າຍໃນສະຖານທີ່ສາທາລະນະ, ລາຍການອາຫານ ແລະ ເຄື່ອງດື່ມຂອງຮ້ານອາຫານ ແລະອື່ນໆທີ່ມັກເຫັນໃນຊີວິດປະຈຳວັນ ແລະ ເຂົ້າໃຈເນື້ອໃນເວລາອ່ານແຜ່ນພັບທີ່ຂຽນດ້ວຍພາສາຍີ່ປຸ່ນແບບງ່າຍໆສຳລັບຄົນຕ່າງປະເທດໄດ້. |
| | ຂຽນ | ເປົ້າໝາຍເພື່ອໃຫ້ຜູ້ຮຽນສາມາດຕື່ມຂໍ້ມູນໃນແບບຟອມທີ່ຈຳເປັນໃນຊີວິດປະຈຳວັນ, ສົ່ງຂໍ້ຄວາມຫາໝູ່ ແລະ ຂຽນອະທິບາຍກ່ຽວກັບສິ່ງທີ່ຕົນເອງຮູ້ຈັກດີແບບງ່າຍໆໃນສື່ສັງຄົມອອນລາຍໄດ້. |

### (2) ຂັ້ນຕອນທົ່ວໄປຂອງກິດຈະກຳທັງໝົດ

ແຕ່ລະກິດຈະກຳມີຂັ້ນຕອນດັ່ງຕໍ່ໄປນີ້:

❶ ເບິ່ງເປົ້າໝາຍ Can-do
ເບິ່ງເປົ້າໝາຍ Can-do ທີ່ຈະຕ້ອງເຮັດໃຫ້ໄດ້ໃນແຕ່ລະກິດຈະກຳ.

❷ ກິດຈະກຳ
ເຮັດກິດຈະກຳສົນທະນາ, ຟັງ, ອ່ານ ແລະ ຂຽນ.

❸ ກວດ Can-do

ໃຊ້ຕາຕະລາງ Can-do ຢູ່ທ້າຍປຶ້ມແບບຮຽນເພື່ອປະເມີນຕົນເອງວ່າສາມາດບັນລຸເປົ້າໝາຍ Can-do ໄດ້ ຫຼື ບໍ່. ຜູ້ຮຽນແຕ່ລະຄົນຕ້ອງກວດວ່າຕົນເອງສາມາດບັນລຸເປົ້າໝາຍ Can-do ໄດ້ຮອດລະດັບໃດ. ນອກຈາກນັ້ນ, ຍັງສາມາດຂຽນຄວາມຄິດເຫັນ ແລະ ສິ່ງທີ່ຢາກເຮັດໃສ່ໃນບ່ອນສະແດງຄວາມຄິດເຫັນໄດ້ຕາມໃຈ. ການກວດ Can-do ສາມາດກວດຫຼັງຈາກທີ່ເຮັດແຕ່ລະກິດຈະກຳແລ້ວ ຫຼື ຫຼັງຈາກທີ່ຮຽນເນື້ອໃນຂອງບົດນັ້ນໝົດແລ້ວກໍໄດ້.





©The Japan Foundation

## (3) ຂັ້ນຕອນຂອງກິດຈະກຳສົນທະນາ, ຟັງ, ອ່ານ ແລະ ຂຽນ

### ກິດຈະກຳສົນທະນາ

❶ ເບິ່ງເປົ້າໝາຍ Can-do




❷ ກະກຽມຄຳສັບ

ຮຽນຄຳສັບທີ່ຈຳເປັນສຳລັບກິດຈະກຳ. ອາດຈະມີ ຫຼື ບໍ່ມີຂຶ້ນກັບແຕ່ລະກິດຈະກຳ ເຊິ່ງມີລຳດັບຂັ້ນຕອນດັ່ງຕໍ່ໄປນີ້:

1. ເບິ່ງຮູບພ້ອມທັງຟັງສຽງແລ້ວກວດຄືນຄວາມໝາຍ
2. ຟັງສຽງແລ້ວເວົ້າຕາມສຽງທີ່ໄດ້ຍິນ

   ຈຸດປະສົງແມ່ນຟັງເພື່ອກວດການອອກສຽງ, ບໍ່ແມ່ນເພື່ອຈື່ຄຳສັບ.
3. ຟັງສຽງແລ້ວເລືອກຮູບທີ່ຖືກກັບເນື້ອໃນ

   ເປັນການທົດສອບວ່າສາມາດຟັງແລ້ວເຂົ້າໃຈຄວາມໝາຍທັນທີ ຫຼື ບໍ່. ຈຸດປະສົງແມ່ນເພື່ອໃຫ້ຜູ້ຮຽນສາມາດເຊື່ອມຕໍ່ຄວາມໝາຍກັບສຳນວນເຫຼົ່ານັ້ນໄດ້.

❸ ຟັງຕົວຢ່າງບົດສົນທະນາ




ເປົ້າໝາຍ Can-do ທີ່ຕ້ອງບັນລຸໃນກິດຈະກຳຕ່າງໆແມ່ນການສົນທະນາ, ເພື່ອບັນລຸເປົ້າໝາຍ Can-do ທຳອິດຕ້ອງຟັງຕົວຢ່າງບົດສົນທະນາໃຫ້ເຂົ້າໃຈເນື້ອໃນໂດຍລວມກ່ອນ. ໃນຂັ້ນຕອນນີ້ບໍ່ຈຳເປັນຕ້ອງເຂົ້າໃຈໄວຍາກອນ ຫຼື ສຳນວນຕ່າງໆຢ່າງລະອຽດ.

ໃນຕົວຢ່າງບົດສົນທະນາມີ "ແບບຟັງບົດສົນທະນາສັ້ນໆໃນສະຖານະການຕ່າງໆ" ແລະ "ແບບຟັງບົດສົນທະນາຍາວໃນສະຖານະການດຽວ" ຂຶ້ນກັບແຕ່ລະກິດຈະກຳ. ໂດຍທົ່ວໄປຮູບແບບທຳອິດຈະບໍ່ມີເນື້ອໃນບົດສົນທະນາຢູ່ໃນເນື້ອໃນຫຼັກ ແຕ່ຈະມີຢູ່ໃນບົດຟັງທ້າຍບົດ. ສ່ວນແບບທີສອງຈະມີເນື້ອໃນບົດສົນທະນາຢູ່ໃນເນື້ອໃນຫຼັກ.

ແຕ່ລະແບບມີຂັ້ນຕອນດັ່ງຕໍ່ໄປນີ້:

● ກໍລະນີແບບບໍ່ມີເນື້ອໃນບົດສົນທະນາຢູ່ໃນເນື້ອໃນຫຼັກ

1. ກ່ອນຟັງກວດເບິ່ງວ່າສົນທະນາກ່ຽວກັບຫຍັງ ແລະ ຢູ່ໃນສະຖານະການໃດ.
2. ຟັງບົດສົນທະນາແລ້ວຕອບຄຳຖາມເພື່ອໃຫ້ເຂົ້າໃຈເນື້ອໃນທີ່ສຳຄັນ.
3. ກວດຄືນຄວາມໝາຍຂອງຄຳສັບ ແລະ ສຳນວນໃໝ່ທີ່ຢູ່ໃນ ▭ ແລ້ວຟັງອີກເທື່ອໜຶ່ງເພື່ອໃຫ້ເຂົ້າໃຈລະອຽດຂຶ້ນຕື່ມ.

● ກໍລະນີແບບມີເນື້ອໃນບົດສົນທະນາຢູ່ໃນເນື້ອໃນຫຼັກ

1. ກ່ອນຟັງກວດເບິ່ງວ່າໃຜກຳລັງສົນທະນາກັບໃຜ ແລະ ຢູ່ໃນສະຖານະການໃດ.
2. ຟັງໂດຍບໍ່ເບິ່ງເນື້ອໃນບົດສົນທະນາແລ້ວຕອບຄຳຖາມເພື່ອໃຫ້ເຂົ້າໃຈເນື້ອໃນໂດຍລວມ.
3. ຟັງໂດຍເບິ່ງເນື້ອໃນບົດສົນທະນາເພື່ອໃຫ້ເຂົ້າໃຈລະອຽດຂຶ້ນ. ພ້ອມດຽວກັນນັ້ນກໍກວດຄືນຄວາມໝາຍຂອງຄຳສັບ ແລະ ສຳນວນໃໝ່ທີ່ຢູ່ໃນ ▭.


©The Japan Foundation

## ❹ ສັງເກດສຳນວນທີ່ໃຊ້

ຮຽນຮູບປະໂຫຍກ ແລະ ສຳນວນທີ່ຈຳເປັນເພື່ອບັນລຸເປົ້າໝາຍ Can-do.

1. ສັງເກດຮູບປະໂຫຍກ ແລະ ສຳນວນ

ໃນຕົວຢ່າງບົດສົນທະນາຈະມີບ່ອນວ່າງທີ່ຂີດເສັ້ນໄວ້ ເຊິ່ງເປັນບ່ອນຕື່ມຮູບປະໂຫຍກ ແລະ ສຳນວນທີ່ຜູ້ຮຽນຕ້ອງສັງເກດ.

ຟັງສຽງແລ້ວຕື່ມຄຳສັບໃສ່ບ່ອນວ່າງ ຫຼັງຈາກນັ້ນສັງເກດເບິ່ງສຳນວນທີ່ໃຊ້.




2. ຄິດກ່ຽວກັບຄວາມໝາຍ ແລະ ວິທີການໃຊ້ຮູບປະໂຫຍກ ແລະ ສຳນວນ

ຕອບຄຳຖາມ ❗ ເພື່ອຄິດກ່ຽວກັບຄວາມໝາຍ ແລະ ວິທີການໃຊ້ຮູບປະໂຫຍກ ແລະ ສຳນວນດັ່ງກ່າວ. ທຳອິດ, ຜູ້ຮຽນຕ້ອງຄິດ ແລະ ຄົ້ນພົບຫຼັກການຂອງພາສາຍີ່ປຸ່ນນັ້ນດ້ວຍຕົນເອງໂດຍທີ່ອາຈານບໍ່ຕ້ອງອະທິບາຍໃຫ້ຟັງກ່ອນ.

➡ ຫຼັງຈາກນັ້ນ, ອ່ານປະໂຫຍກຕົວຢ່າງ ແລະ ຄຳອະທິບາຍເພື່ອກວດຄືນຄວາມໝາຍ ແລະ ວິທີການໃຊ້ຢູ່ໃນ "ໄວຍາກອນ".

3. ຟັງຕົວຢ່າງບົດສົນທະນາອີກເທື່ອໜຶ່ງໂດຍສັງເກດສຳນວນທີ່ໃຊ້

ຟັງບົດສົນທະນາອີກເທື່ອໜຶ່ງເພື່ອກວດຄືນວ່າຮູບປະໂຫຍກ ແລະ ສຳນວນທີ່ໄດ້ຮຽນແລ້ວນັ້ນໃຊ້ແນວໃດໃນບົດສົນທະນາ.

## ❺ ສົນທະນາ

ພາກສ່ວນນີ້ແມ່ນເພື່ອບັນລຸເປົ້າໝາຍ Can-do ຂອງກິດຈະກຳນີ້. ຜູ້ຮຽນຕ້ອງຝຶກໄປຕາມລຳດັບຂັ້ນຕອນດັ່ງນີ້:

1. ຟັງຕົວຢ່າງບົດສົນທະນາ

ຟັງສຽງແລ້ວກວດລຳດັບບົດສົນທະນາ ແລະ ສຳນວນທີ່ຢູ່ໃນບັອກຄຳເວົ້າຂອງບົດສົນທະນາຕົວຢ່າງ ເຊິ່ງເປັນສິ່ງທີ່ຊ່ວຍໃຫ້ຜູ້ຮຽນບັນລຸເປົ້າໝາຍ Can-do.




2. ຝຶກເວົ້າຕາມສຽງທີ່ໄດ້ຍິນ

ເປັນການຝຶກເພື່ອໃຫ້ສາມາດເວົ້າໄດ້ຫຼ່ຽນໄຫຼຂຶ້ນ. ທຳອິດ, ຝຶກເວົ້າຕາມສຽງທີ່ໄດ້ຍິນໂດຍເບິ່ງບັອກຄຳເວົ້າຂອງບົດສົນທະນາ. ຫຼັງຈາກນັ້ນ, ຝຶກເວົ້າຕາມສຽງທີ່ໄດ້ຍິນຊ້ຳຄືນຫຼາຍຄັ້ງຈົນສາມາດເວົ້າໄດ້ໂດຍບໍ່ເບິ່ງບັອກຄຳເວົ້າຂອງບົດສົນທະນາ.

3. ຝຶກຊ້ອມ

ເປັນການກະກຽມກ່ອນເຂົ້າສູ່ຂັ້ນຕອນຕໍ່ໄປ "4. ສົນທະນາຕາມໃຈ". ກິດຈະກຳນີ້ອາດຈະມີ ຫຼື ບໍ່ມີ. ຜູ້ຮຽນສາມາດສົນທະນາໂດຍປ່ຽນຄຳສັບທີ່ຢູ່ໃນບັອກຄຳເວົ້າຂອງບົດສົນທະນາແລ້ວຝຶກເວົ້າຕາມເນື້ອໃນຂອງບົດສົນທະນາຕົວຢ່າງ ❸.

4. ສົນທະນາຕາມໃຈ

ເວົ້າກ່ຽວກັບຕົນເອງຕາມໃຈ ຫຼື ສົມມຸດບົດບາດ. ບໍ່ພຽງແຕ່ປ່ຽນຄຳສັບທີ່ຢູ່ໃນບັອກຄຳເວົ້າຂອງບົດສົນທະນາ ແຕ່ຍັງສາມາດເວົ້າສິ່ງທີ່ຕົນເອງຕ້ອງການເວົ້າໄດ້. ຜູ້ຮຽນສາມາດຊອກຫາຄຳສັບທີ່ຈຳເປັນຈາກວັດຈະນານຸກົມ ແລະ ສະມາດໂຟນໄດ້.

## ❻ ກວດ Can-do


©The Japan Foundation

## ການຝຶກເວົ້າຕາມສຽງທີ່ໄດ້ຍິນແມ່ນຫຍັງ?

"ການຝຶກເວົ້າຕາມສຽງທີ່ໄດ້ຍິນ" ແມ່ນການຝຶກເວົ້າຮຽນແບບພາສາຍີ່ປຸ່ນຕາມທີ່ໄດ້ຍິນໂດຍທັນທີ. ບໍ່ແມ່ນການຟັງສຽງທັງໝົດແລ້ວຈຶ່ງເວົ້າຕາມຫຼັງ, ແຕ່ແມ່ນການອອກສຽງຄ່ອຍໆຕາມສຽງທີ່ໄດ້ຍິນນັ້ນທັນທີຄືກັນກັບເປັນເງົາ.








©The Japan Foundation

## ກິດຈະກຳຟັງ

ຂັ້ນຕອນຂອງກິດຈະກຳແມ່ນຄືກັນກັບການສົນທະນາ ແຕ່ເປົ້າໝາຍ Can-do ແມ່ນການຟັງເພື່ອໃຫ້ເຂົ້າໃຈເນື້ອໃນ, ຖ້າຜູ້ຮຽນສາມາດຟັງ ແລະ ເຂົ້າໃຈຈຸດສຳຄັນ ໄດ້ຖືວ່າບັນລຸເປົ້າໝາຍ Can-do.

❶ ເບິ່ງເປົ້າໝາຍ Can-do

❷ ກະກຽມຄຳສັບ

ຮຽນຄຳສັບທີ່ຄວນຮູ້ກ່ອນຟັງ. ບາງກິດຈະກຳອາດຈະມີ ຫຼື ບໍ່ມີຂັ້ນຕອນນີ້. ຂັ້ນຕອນຂອງກິດຈະກຳແມ່ນຄືກັນກັບກິດຈະກຳສົນທະນາ.

❸ ຟັງ

ພາກສ່ວນນີ້ແມ່ນເພື່ອບັນລຸເປົ້າໝາຍ Can-do ຂອງກິດຈະກຳນີ້.

1. ກວດເບິ່ງສະຖານະການທີ່ກຳນົດໄວ້

   ກ່ອນຟັງເບິ່ງຮູບເພື່ອກວດເບິ່ງວ່າແມ່ນບົດສົນທະນາໃນສະຖານະການໃດ, ມີຈຸດປະສົງເພື່ອຫຍັງ ແລະ ຟັງກ່ຽວກັບຫຍັງ.

2. ເຂົ້າໃຈເນື້ອໃນຕາມລຳດັບ

   ຕອບຄຳຖາມເພື່ອໃຫ້ເຂົ້າໃຈເນື້ອໃນທີ່ສຳຄັນ. ການຝຶກມີຫຼາກຫຼາຍຮູບແບບຂຶ້ນກັບແຕ່ລະກິດຈະກຳເຊັ່ນ: ເລືອກຮູບທີ່ກົງກັບເນື້ອໃນ, ເລືອກຄຳສັບສຳຄັນໃນບົດສົນທະນາ, ບັນທຶກຈຸດສຳຄັນ, ໝາຍ ○ ຫຼື × ແລະອື່ນໆ. ບໍ່ຈຳເປັນຕ້ອງເຂົ້າໃຈສິ່ງທີ່ຟັງທັງໝົດ, ຖ້າສາມາດຕອບຄຳຖາມໄດ້ກໍຖືວ່າບັນລຸເປົ້າໝາຍ Can-do.

3. ກວດຄືນຄຳສັບແລ້ວຟັງອີກເທື່ອໜຶ່ງ

   ເປັນກິດຈະກຳເພີ່ມຕື່ມເພື່ອໃຫ້ຜູ້ຮຽນຟັງເນື້ອໃນໄດ້ໃຫ້ລະອຽດຂຶ້ນກວ່າເກົ່າ. ກວດຄືນຄວາມໝາຍຂອງຄຳສັບ ແລະ ສຳນວນໃໝ່ທີ່ຢູ່ໃນ ▭ ແລ້ວຟັງອີກເທື່ອໜຶ່ງ. ໃນລະດັບພື້ນຖານອາດຈະມີຄຳສັບຍາກໜ້ອຍໜຶ່ງ, ແຕ່ບໍ່ຈຳເປັນຕ້ອງຈື່ໄດ້ທັງໝົດ.

   ➡ ຖ້າຕ້ອງການກວດຄືນບ່ອນທີ່ຟັງບໍ່ເຂົ້າໃຈສາມາດເບິ່ງເນື້ອໃນບົດສົນທະນາຢູ່ໃນບົດຟັງທ້າຍບົດເພີ່ມຕື່ມໄດ້.

❹ ສັງເກດສຳນວນທີ່ໃຊ້

ສັງເກດຮູບປະໂຫຍກ ແລະ ສຳນວນໃໝ່ທີ່ໄດ້ຟັງຈາກບົດສົນທະນາ. ຂັ້ນຕອນຂອງກິດຈະກຳແມ່ນຄືກັນກັບກິດຈະກຳສົນທະນາ. ແຕ່ກໍລະນີບໍ່ມີຮູບປະໂຫຍກ ແລະ ສຳນວນໃໝ່ກໍຈະບໍ່ມີຂັ້ນຕອນນີ້.

❺ ກວດ Can-do










 ©The Japan Foundation

## ກິດຈະກຳອ່ານ

❶ ເບິ່ງເປົ້າໝາຍ Can-do

❷ ອ່ານ




ພາກສ່ວນນີ້ແມ່ນເພື່ອບັນລຸເປົ້າໝາຍ Can-do ຂອງກິດຈະກຳນີ້.

1. ກວດເບິ່ງສະຖານະການທີ່ກຳນົດໄວ້

ກ່ອນອ່ານກວດເບິ່ງວ່າຢູ່ໃນສະຖານະການໃດ, ມີຈຸດປະສົງເພື່ອຫຍັງ ແລະ ອ່ານກ່ຽວກັບຫຍັງ.

2. ເຂົ້າໃຈເນື້ອໃນຕາມລຳດັບ

ຕອບຄຳຖາມເພື່ອໃຫ້ເຂົ້າໃຈເນື້ອໃນທີ່ຈຳເປັນ. ທຳອິດ, ອ່ານຈັບໃຈຄວາມສຳຄັນເຊັ່ນ: ເລື່ອງນີ້ຂຽນກ່ຽວກັບຫຍັງ, ເນື້ອໃນທີ່ສຳຄັນຢູ່ບ່ອນໃດ, ແລ້ວຈຶ່ງຄ່ອຍໆອ່ານເນື້ອໃນແບບລະອຽດຂຶ້ນ. ເຖິງຈະບໍ່ເຂົ້າໃຈເນື້ອໃນທັງໝົດ, ຖ້າສາມາດຕອບຄຳຖາມໄດ້ກໍຖືວ່າບັນລຸເປົ້າໝາຍ Can-do.

ສິ່ງທີ່ພົບເຫັນຕົວຈິງໃນການດຳລົງຊີວິດຢູ່ປະເທດຍີ່ປຸ່ນສ່ວນຫຼາຍບໍ່ມີຟູລິກະນະຢູ່ໃນບົດອ່ານ. ດັ່ງນັ້ນ, ບົດອ່ານໃນປຶ້ມແບບຮຽນຈຶ່ງບໍ່ມີຟູລິກະນະເຊັ່ນດຽວກັນ. ກໍລະນີອ່ານຕົວຈິງໃນການດຳລົງຊີວິດຢູ່ປະເທດຍີ່ປຸ່ນອາດຈະພົບເຫັນຄຳສັບທີ່ບໍ່ຮູ້ຄວາມໝາຍ ແລະ ຕົວອັກສອນຄັນຈິທີ່ບໍ່ຮູ້ວິທີອ່ານເປັນຈຳນວນຫຼາຍ. ເພື່ອເປັນການກຽມພ້ອມສຳລັບການດຳລົງຊີວິດຢູ່ປະເທດຍີ່ປຸ່ນ. ທຳອິດ, ຜູ້ຮຽນຄວນພະຍາຍາມລອງເດົາຄວາມໝາຍ ແລະ ລອງອ່ານໂດຍໃຊ້ຄຳສັບທີ່ຮູ້ຈັກ, ຮູບຖ່າຍ ຫຼື ຮູບປະກອບຕ່າງໆເປັນຕົວຊ່ວຍໂດຍບໍ່ຕ້ອງກວດຄວາມໝາຍຂອງຄຳສັບຢູ່ "ຄຳສັບສຳຄັນ" ຫຼື ເບິ່ງວັດຈະນານຸກົມ.

**大切(たいせつ)なことば** ກວດ "ຄຳສັບສຳຄັນ"

"ຄຳສັບສຳຄັນ" ແມ່ນຄຳສັບທີ່ປາກົດໃນບົດອ່ານເຊິ່ງໄດ້ເລືອກເອົາຄຳສັບທີ່ເປັນປະໂຫຍດໃນການດຳລົງຊີວິດຢູ່ປະເທດຍີ່ປຸ່ນ ແລະ ຄຳສັບທີ່ຜູ້ຮຽນລະດັບພື້ນຖານຄວນຈື່. ທຳອິດ, ລອງອ່ານດ້ວຍຕົນເອງແລ້ວຈຶ່ງກວດຄວາມໝາຍຂອງຄຳສັບຢູ່ "ຄຳສັບສຳຄັນ" ຫຼື ເບິ່ງວັດຈະນານຸກົມເພື່ອກວດວິທີອ່ານຂອງຕົວອັກສອນຄັນຈິ ແລະ ຄຳສັບທີ່ບໍ່ຮູ້. ຫຼັງຈາກນັ້ນ, ລອງອ່ານຄືນອີກເທື່ອໜຶ່ງກໍເປັນການດີ.

3. ເຂົ້າໃຈເນື້ອໃນທີ່ອ່ານໃຫ້ເລິກເຊິ່ງຂຶ້ນກວ່າເກົ່າ

ຕອບຄຳຖາມເພື່ອໃຫ້ເຂົ້າໃຈເນື້ອໃນເລິກເຊິ່ງຂຶ້ນກວ່າເກົ່າໂດຍຄິດຄືນເຖິງປະສົບການຂອງຕົນເອງ ແລະ ປຽບທຽບກັບປະເທດຂອງຕົນເອງ. ການສົນທະນາກັບໝູ່ໃນຫ້ອງຮຽນສາມາດໃຊ້ພາສາທີ່ທຸກຄົນສື່ສານກັນໄດ້. ຂັ້ນຕອນນີ້ອາດຈະມີ ຫຼື ບໍ່ມີຂຶ້ນກັບແຕ່ລະກິດຈະກຳ.

❸ ສັງເກດສຳນວນທີ່ໃຊ້

ພາກສ່ວນນີ້ມີຮູບປະໂຫຍກ ແລະ ສຳນວນທີ່ປາກົດໃນບົດອ່ານເຊິ່ງເປັນຮູບປະໂຫຍກ ແລະ ສຳນວນທີ່ຜູ້ຮຽນລະດັບພື້ນຖານຄວນຮູ້. ຂັ້ນຕອນຂອງກິດຈະກຳແມ່ນຄືກັນກັບກິດຈະກຳສົນທະນາ ແລະ ຟັງ. ແຕ່ໃນກິດຈະກຳອ່ານບໍ່ມີການຟັງສຽງ. ຜູ້ຮຽນຈະຕ້ອງອ່ານບົດອ່ານ ແລ້ວຕື່ມຄຳສັບໃສ່ບ່ອນວ່າງທີ່ຂີດເສັ້ນໄວ້. ຂັ້ນຕອນນີ້ອາດຈະມີ ຫຼື ບໍ່ມີຂຶ້ນກັບແຕ່ລະກິດຈະກຳ.




❹ ກວດ Can-do


©The Japan Foundation

## ກິດຈະກຳຂຽນ

❶ ເບິ່ງເປົ້າໝາຍ Can-do

❷ ຂຽນ

1. ກວດເບິ່ງສະຖານະການທີ່ກຳນົດໄວ້

ກ່ອນຂຽນກວດເບິ່ງວ່າຢູ່ໃນສະຖານະການໃດ, ມີຈຸດປະສົງເພື່ອຫຍັງ ແລະ ຂຽນກ່ຽວກັບຫຍັງ.

2. ອ່ານຕົວຢ່າງ

ກໍລະນີມີຕົວຢ່າງແມ່ນອ່ານຕົວຢ່າງເພື່ອໃຫ້ຈິນຕະນາການເຫັນພາບຢ່າງລະອຽດວ່າຕ້ອງຂຽນແບບໃດດີ. ອາດຈະໃຊ້ກິດຈະກຳອ່ານທີ່ໄດ້ເຮັດມາກ່ອນໜ້ານີ້ເປັນຕົວຢ່າງໃນການຂຽນ.

3. ຂຽນ

ເວລາຂຽນຕົວຈິງຈະມີການຂຽນດ້ວຍມືໃນການຕື່ມແບບຟອມ ແລະ ການຂຽນດ້ວຍຄອມພິວເຕີ ຫຼື ສະມາດໂຟນ. ຖ້າເປັນໄປໄດ້ລອງຂຽນດ້ວຍຄອມພິວເຕີ ຫຼື ສະມາໂຟນແລ້ວສົ່ງຂໍ້ຄວາມ ຫຼື ລົງໃນສື່ສັງຄົມອອນລາຍ.

4. ຮັບຄຳຕິຊົມກ່ຽວກັບສິ່ງທີ່ຂຽນ

ປ່ຽນກັນອ່ານສິ່ງທີ່ໝູ່ຂຽນຢູ່ໃນຫ້ອງຮຽນແລ້ວປະກອບຄຳເຫັນ ແລະ ຕອບກັບໃຫ້ໝູ່. ການຮັບຄຳຕິຊົມຈາກມຸມມອງຂອງຜູ້ອ່ານຈະເຮັດໃຫ້ຜູ້ຮຽນຮຽນຮູ້ການຂຽນຈາກພວກເຂົາ. ຂັ້ນຕອນນີ້ອາດຈະມີ ຫຼື ບໍ່ມີຂຶ້ນກັບແຕ່ລະກິດຈະກຳ.

❸ ກວດ Can-do



トピック いっしょに出かける
第7課 道に迷ってちょっと遅れます

4. 30分おくれます

Can-do 23 待ち合わせに遅れることを伝えるメッセージを書くことができる。
Can write a message saying that you will be late for the arranged time.

1 メッセージを書きましょう。
Write a message as follows.

▶ 待ち合わせの時間に遅れるので、相手にメッセージを送ります。
You are sending a message to say you will be late for the arranged time.

例を参考にして、メッセージを書きましょう。遅れる理由や時間は自由に考えましょう。
Write a message. Freely think about the reasons and how late you will be.

(例)



2 メッセージをもらった人は、返事を書いて送りましょう。
If you receive a message, write your reply and send it.

初級1 L7 - 8 ©The Japan Foundation

 ©The Japan Foundation

## 3 ເນື້ອໃນຂອງພາກສ່ວນອື່ນໆ ແລະ ຂັ້ນຕອນໃນການຮຽນ

### ຄຳສັບຄັນຈິ

ເປັນພາກສ່ວນຝຶກຊ້ອມຕົວອັກສອນຄັນຈິລະດັບພື້ນຖານທີ່ປາກົດໃນຄຳສັບ. ເປົ້າໝາຍແມ່ນເພື່ອໃຫ້ຜູ້ຮຽນເຫັນແລ້ວເຂົ້າໃຈຄວາມໝາຍຂອງຕົວອັກສອນຄັນຈິທີ່ຈຳເປັນໃນຊີວິດປະຈຳວັນ ແລະ ສາມາດພິມຕົວອັກສອນຄັນຈິໂດຍໃຊ້ຄອມພິວເຕີ ແລະ ສະມາດໂຟນໃນກໍລະນີທີ່ຈຳເປັນ.

ໃນແຕ່ລະບົດຄຳສັບທີ່ປາກົດໃນກິດຈະກຳຈະປະກອບດ້ວຍຄຳສັບຄັນຈິປະມານ 10 ຄຳ (ຕົວອັກສອນຄັນຈິທີ່ຈະໄດ້ຮຽນຢູ່ “ເລີ່ມຕົ້ນ”, “ພື້ນຖານ 1” ແລະ “ພື້ນຖານ 2” ມີທັງໝົດ 429 ໂຕ). ຜູ້ຮຽນສາມາດປະຕິບັດຕາມຂັ້ນຕອນດັ່ງຕໍ່ໄປນີ້:

❶ ກວດຄືນວິທີອ່ານ ແລະ ຄວາມໝາຍ

ສັງເກດວິທີອ່ານຕົວອັກສອນຄັນຈິພ້ອມທັງກວດເບິ່ງຄວາມໝາຍຂອງຄຳສັບ. ຕົວອັກສອນຄັນຈິຈະພິມດ້ວຍຮູບແບບຕົວອັກສອນ 3 ແບບເພື່ອໃຫ້ຜູ້ຮຽນລຶ້ງເຄີຍກັບຮູບແບບຕ່າງໆຂອງຕົວອັກສອນຄັນຈິ.

❷ ອ່ານຕົວອັກສອນຄັນຈິໃນປະໂຫຍກ

ອ່ານປະໂຫຍກທີ່ມີຄຳສັບຄັນຈິເພື່ອກວດຄືນວ່າສາມາດອ່ານ ແລະ ເຂົ້າໃຈຄວາມໝາຍໄດ້ ຫຼື ບໍ່.

❸ ພິມຕົວອັກສອນຄັນຈິ

ສຸດທ້າຍ, ພິມຄຳສັບຄັນຈິທີ່ໄດ້ຮຽນໂດຍຄອມພິວເຕີ, ສະມາດໂຟນ ຫຼື ແທັບເລັດເພື່ອກວດຄືນວ່າສາມາດພິມໄດ້ຖືກຕ້ອງແລ້ວບໍ່. ຜູ້ຮຽນບໍ່ຈຳເປັນຕ້ອງຂຽນຕົວອັກສອນຄັນຈິດ້ວຍມື ແຕ່ສຳລັບຜູ້ຮຽນທີ່ສົນໃຈ ແລະ ຢາກຝຶກການຂຽນດ້ວຍມືກໍສາມາດຝຶກຂຽນໄດ້.




ບົດທີ 1 ແລະ ບົດທີ 2 ຂອງ “ເລີ່ມຕົ້ນ” ຄຳສັບຄັນຈິຈະປ່ຽນເປັນຄຳສັບຮິລະງະນະ ແລະ ຄຳສັບຄະຕະກະນະ.

### ໄວຍາກອນ

ເປັນການອະທິບາຍກ່ຽວກັບຮູບປະໂຫຍກ ແລະ ສຳນວນທີ່ໄດ້ຮຽນໃນແຕ່ລະບົດ. ແຕ່ລະກິດຈະກຳທີ່ຍົກຂຶ້ນມາຈະມີ: ສັງເກດຮູບປະໂຫຍກ ແລະ ສຳນວນທີ່ຢູ່ໃນ “ສັງເກດສຳນວນທີ່ໃຊ້”. ຖ້າອ່ານຄຳອະທິບາຍຢູ່ “ສັງເກດສຳນວນທີ່ໃຊ້” ກໍຈະຮູ້ຄຳຕອບຂອງຄຳຖາມ ❗ .

ແຕ່ລະຫົວຂໍ້ທີ່ຍົກຂຶ້ນມາໃນແຕ່ລະບົດຈະມີການອະທິບາຍຮູບແບບ, ຄວາມໝາຍ ແລະ ສະຖານະການທີ່ໃຊ້ໃນບົດນັ້ນໆ. ນອກຈາກນັ້ນ, ຍັງມີປະໂຫຍກຕົວຢ່າງ ແລະ ຂໍ້ມູນເພີ່ມຕື່ມກ່ຽວກັບວິທີການໃຊ້ສຳນວນ ຫຼື ຮູບປະໂຫຍກທີ່ບໍ່ມີໃນກິດຈະກຳຂອງປຶ້ມແບບຮຽນເຫຼັ້ມນີ້. ເວລາຈຳເປັນແມ່ນມີຕາຕະລາງສະຫຼຸບການປ່ຽນຮູບຄຳ ແລະ ການປຽບທຽບສຳນວນທີ່ມີຄວາມໝາຍໃກ້ຄຽງກັນໃຫ້ນຳ. ດັ່ງນັ້ນ, ຜູ້ຮຽນສາມາດຈັດລຽງຄວາມຮູ້ກ່ຽວກັບໄວຍາກອນໄດ້.




ໃນຊົ່ວໂມງຮຽນກິດຈະກຳຂອງ “ສັງເກດສຳນວນທີ່ໃຊ້” ກ່ອນອື່ນໝົດຜູ້ຮຽນຕ້ອງຄິດກ່ຽວກັບຮູບປະໂຫຍກ ແລະ ສຳນວນດ້ວຍຕົນເອງ. ຫຼັງຈາກນັ້ນ, ຜູ້ຮຽນສາມາດອ່ານຄຳອະທິບາຍ ຫຼື ຟັງຄຳອະທິບາຍຈາກຜູ້ສອນ. ນອກຈາກນັ້ນ, ໃນຊົ່ວໂມງຮຽນຜູ້ສອນອາດຈະອະທິບາຍແບບງ່າຍໆ ແລະ ໃຫ້ຜູ້ຮຽນໄປອ່ານເປັນວຽກບ້ານດ້ວຍຕົນເອງຢູ່ເຮືອນ.

 ©The Japan Foundation

ປຶ້ມແບບຮຽນເຫຼັ້ມນີ້ບໍ່ແມ່ນແບບຝຶກຫັດທີ່ເຮັດເພື່ອເນັ້ນຝຶກໄວຍາກອນ. ເວລາຈຳເປັນແມ່ນສາມາດໃຊ້ປຶ້ມແບບຮຽນເຫຼັ້ມນີ້ຄວບຄູ່ກັນກັບສື່ການຮຽນ-ການສອນອື່ນໄດ້ເຊັ່ນ: ປຶ້ມ りかい ຂອງປຶ້ມແບບຮຽນ "ມະລິໂກະໂຕະ". ເຖິງຢ່າງໃດກໍຕາມຜູ້ສອນຄວນໃຫ້ຄວາມສຳຄັນກັບການຝຶກໄວຍາກອນຕາມເປົ້າໝາຍ Can-do.

ການອະທິບາຍໃນພາກສ່ວນນີ້ແມ່ນມີໄວ້ເພື່ອໃຫ້ຜູ້ຮຽນອ່ານເປັນພາສາລາວ. ສ່ວນພາສາຍີ່ປຸ່ນມີໄວ້ສຳລັບໃຫ້ອາຈານອ່ານເປັນຂໍ້ມູນອ້າງອີງຜູ້ຮຽນບໍ່ຈຳເປັນຕ້ອງອ່ານ ແລະ ເຂົ້າໃຈໃນສ່ວນຂອງພາສາຍີ່ປຸ່ນ.

ພາກສ່ວນນີ້ແມ່ນການໃຊ້ສັນຍາລັກຕ່າງໆເພື່ອສະແດງປະເພດຂອງຄຳດັ່ງນີ້:

N …… ຄຳນາມ
ナA …… ຄຳຄຸນນາມ ナ
イA …… ຄຳຄຸນນາມ イ
V …… ຄຳກຳມະ
S …… ປະໂຫຍກ

V-る ແມ່ນຄຳກຳມະຮູບວັດຈະນານຸກົມ. ລວມທັງຄຳກຳມະທີ່ບໍ່ໄດ້ລົງທ້າຍດ້ວຍ る ຕົວຢ່າງ 読(よ)む ຫຼື 行(い)く.

## ສິ່ງທີ່ຄວນຮູ້ກ່ຽວກັບການດຳລົງຊີວິດຢູ່ປະເທດຍີ່ປຸ່ນ

ຄໍລຳນີ້ຮວບຮວມຄວາມຮູ້ທີ່ເປັນປະໂຫຍດສຳລັບການດຳລົງຊີວິດຢູ່ຍີ່ປຸ່ນ. ສາມາດຮຽນຮູ້ກ່ຽວກັບການດຳລົງຊີວິດ ແລະ ວັດທະນະທຳຍີ່ປຸ່ນຈາກຮູບຖ່າຍ ແລະ ຮູບປະກອບຕ່າງໆໄດ້ຢ່າງມ່ວນຊື່ນ.

ຫົວຂໍ້ຂອງແຕ່ລະບົດມາຈາກເນື້ອໃນໃນບົດຮຽນ ໂດຍສະເພາະສິ່ງທີ່ຄວນອະທິບາຍໃຫ້ແກ່ຜູ້ຮຽນທີ່ຍັງບໍ່ເຄີຍໄປປະເທດຍີ່ປຸ່ນ. ນອກຈາກນັ້ນ, ຍັງມີຂໍ້ມູນອ້າງອີງທີ່ເປັນປະໂຫຍດ ແລະ ຄວນຮູ້ໄວ້ເພື່ອດຳລົງຊີວິດຢູ່ຍີ່ປຸ່ນ. ຫຼັງຈາກເຮັດກິດຈະກຳແລ້ວສາມາດອ່ານດ້ວຍຕົນເອງ ຫຼື ຈະໃຊ້ໃນຫ້ອງຮຽນກໍໄດ້. ເວລາມີເນື້ອໃນທີ່ຈຳເປັນຕ້ອງການອະທິບາຍເພີ່ມຕື່ມໃນກິດຈະກຳກໍສາມາດໃຊ້ຄໍລຳນີ້ອ້າງອີງໄດ້.

ພາກສ່ວນນີ້ຄືກັນກັບ "ໄວຍາກອນ" ມີໄວ້ເພື່ອໃຫ້ຜູ້ຮຽນອ່ານເປັນພາສາລາວ. ສ່ວນພາສາຍີ່ປຸ່ນມີໄວ້ສຳລັບໃຫ້ອາຈານອ່ານເປັນຂໍ້ມູນອ້າງອີງຜູ້ຮຽນບໍ່ຈຳເປັນຕ້ອງອ່ານ ແລະ ເຂົ້າໃຈໃນສ່ວນຂອງພາສາຍີ່ປຸ່ນ.


トピック おいしい料理
第11課 肉と野菜は私が買って行きます

日本の生活TIPS

● バーベキュー Barbecue

Barbecues are a way of grilling and eating food outdoors. Many countries enjoy barbecuing, especially Japan. Japanese barbecues are special in the following ways:

- You can grill meat with squash, onions, corn, and other vegetables, as well as shrimp, squid, shellfish, and other seafoods.
- In some countries, you start eating after all the food is cooked. However, in Japanese barbecue, cooking and eating go on at the same time.
- *Yakisoba* (fried noodles) or *yaki-onigiri* (grilled rice balls) are typically eaten last.
- It is common to rent barbecue equipment at parks and campsites.
- You can rent and buy everything you need (equipment, food, drinks, etc.) at some barbecue places.
- Barbeque places on rooftops or terraces in cities have also become popular recently.

屋外で、グリルで食べ物を焼いて食べるバーベキューは、日本だけではなくいろいろな国で行われる料理のイベントですが、日本のバーベキューには、次のような特徴があります。

- 肉が中心だが、肉だけでなく、かぼちゃ、たまねぎ、とうもろこしなどの野菜や、エビ、イカ、貝などのシーフードも焼く。
- すべてを焼いてから食べるのではなく、焼いては食べ、焼いては食べ、を繰り返す。
- 最後に焼きそばや焼きおにぎりを食べることも一般的。
- バーベキューの道具は、自分の道具ではなく、公園やキャンプ場などですべてレンタルすることも多い。
- 道具や材料をすべて用意してくれて、手ぶらで行ってお金を払うだけでバーベキューが楽しめるバーベキュー場もある。
- ビルの屋上やテラスなどを使った「都会で楽しむバーベキュー場」の有料施設も、最近人気が出ている。

● スーパーの惣菜(そうざい)コーナー Cooked dishes in supermarkets

In the cooked-dish section of a supermarket, side dishes are sold. You can buy them, bring them home, and eat a meal without cooking. Common side dishes are fried foods (such as croquettes), *yakitori* (grilled chicken), *nimono* (boiled dishes), and salads. Supermarkets sell common side dishes that families often make at home and hard-to-prepare side dishes that are not easily made at home.

People who are too busy to cook like cooked-dish sections in supermarkets. Some people also use this section to buy some healthy food. These dishes are sold at a discount before the store closes.

スーパーの総菜コーナーでは、調理されたおかずが売られていて、買って帰れば自分で調理しないでそのまま食べることができます。よく売られているおかずは、揚げ物（からあげ、コロッケなど）、焼き鳥、煮物、サラダなどがあり、一般家庭でよく作るおかずだけでなく、家ではなかなか作れない本格的な味の惣菜を売りにしているスーパーもあります。

総菜コーナーは、忙しくて自分で料理をする時間がない人にとってはありがたい存在です。また、栄養バランスを取るために料理を少しだけ買い足したりするなど、上手に利用している人もいます。閉店時間が近づくと、総菜が売れ残らないように、割引セールが行われます。

初級1 L11 - 20 ©The Japan Foundation


©The Japan Foundation